# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 6 ກັນຍາ 2009 (9-6-2009)

## ພຣະເຢຊູທີ່ມະນຸດຄວນຈະຮູ້ຈັກ

**ຂໍ້ພຣະຄັມພີໃນບົດຮຽນ:** ມາຣະໂກ 1:1-3,7,9-13,21-28

**ບົດຮຽນນີ້ສາມາດຊ່ວຍທ່ານໄດ້ແນວໃດ:** ບົດຮຽນນີ້ຈະຊ່ວຍທ່ານໃຫ້ສ້າງສັມພັນລະຫວ່າງຣິດເດດອັນພິເສດ ແລະອຳນາດຂອງພຣະເຢຊູແລະຊີວິດພິເສດທີ່ພຣະອົງຊົງເອີ້ນໃຫ້ທ່ານດຳຣົງນັ້ນ.

**ບົດຮຽນນີ້ແມ່ນກ່ຽວກັບອັນໃດ:** ການແນະນຳຂອງມາຣະໂກເປີດເຜີຍໃຫ້ເຫັນບຸກຄະລິກພິເສດຂອງພຣະເຢຊູ. ພຣະເຢຊູແມ່ນຜູ້ທີ່ໄດ້ມາເຮັດໃຫ້ຄຳທຳນວາຍໃນພຣະຄັມພີເດີມໃຫ້ສຳເຮັດແລະກໍເປັນບຸດຂອງພຣະເຈົ້າອົງຊົງຣິດ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ:** ມີຫລາຍຄົນບໍ່ມີຄວາມແນ່ນອນວ່າພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດພົ້ນບາບ, ເປັນບຸດຂອງພຣະເຈົ້າ. ມີຫລາຍຄົນຍັງລັ່ງເລບໍ່ຫມັ້ນໃຈໃນການຮັບເອົາພຣະຄຣິດພຽງຜູ້ດຽວ. ຂໍ້ຄວາມຕ່າງໆຊຶ່ງພົບໃນບົດບັນທຶກຂອງມາຣະໂກບອກວ່າພຣະເຢຊູຄືພຣະຄຣິດ.

ໃນຂນະທີ່ລໍຄອຍຣົດເມຢູ່ທີ່ປ້າຍ, ໂຈໄດ້ເລີ້ມຕົ້ນໂອ້ລົມກັບຜູ້ຊາຍບາງຄົນໃນທີ່ນັ້ນ, ຊຶ່ງກໍລາມໄປເຖິງເຣື່ອງຝ່າຍຈິດວິນຍານ. ຊາຍຄົນນັ້ນຮ້ອງພຣະເຈົ້າໃນນາມທີ່ແຕກຕ່າງໄປແລະຍັງແຖມໄປອີກວ່າ "ພວກເຮົາກໍເຊື່ອໃນພຣະເຈົ້າອົງດຽວກັນບໍ່ແມ່ນຫລື?" ໂຈກໍຖາມຄືນໄປວ່າ, " ພຣະເຈົ້າຂອງເຈົ້າໄດ້ສົ່ງພຣະບຸດຂອງພຣະອົງມາຕາຍແທນຄວາມຜິດບາບຂອງທ່ານບໍ່ແລະໄດ້ຟື້ນຄືນມີຊີວິດອີກບໍ່?" "ບໍ່" ຊາຍຄົນນັ້ນຕອບ,"ພຣະເຈົ້າຂອງຂ້ອຍບໍ່ມີພຣະບຸດ." "ຄັນຊັ້ນພວກເຮົາກໍບໍ່ມີພຣະເຈົ້າອົງດຽວກັນ," ໂຈໄດ້ຕອບຊາຍຄົນນັ້ນ.

ໃນສມັຍນີ້ມີຫລາຍຄົນກໍເຮັດແບບງ່າຍໆຄືເອົາຄວາມເຊື່ອຕ່າງໆມາລວມເຂົ້າກັນເລີຍ. ການສຶກສາໃນມື້ນີ້ຈະຊ່ວຍໃຫ້ພວກເຮົາເຫັນພຣະເຢຊູຜູ້ຊຶ່ງເປັນບຸດພິເສດຂອງພຣະເຈົ້າອົງທ່ຽງແທ້ແຕ່ພຽງອົງດຽວ.

## ສຶກສາພຣະຄັມພີ

**1. ຮູ້ຈັກພຣະບຸດອົງພິເສດຂອງພຣະເຈົ້າ** (ມາຣະໂກ 1:1-3)

ໃນຫ້ອງສານຕັດສິນຄວາມ, ພວກພຍານທັງຫລາຍກໍຈະໃຫ້ການກ່ຽວກັບສິ່ງທີ່ພວກເຂົາໄດ້ເຫັນ, ໄດ້ຍິນ, ແລະໄດ້ປະສົບການ. ມາຣະໂກກໍເປັນພຍານທີ່ດີທີ່ສຸດເພາະວ່າລາວໄດ້ຮູ້ຈັກກັບພຣະເຢຊູແບບສ່ວນຕົວ. ຕອນທີ່ລາວຍັງຫນຸ່ມນ້ອຍຢູ່ນັ້ນ, ມາຣະໂກເບິ່ງຄືວ່າຄົງຈະໄດ້ຕິດຕາມພຣະເຢຊູຊຶ່ງເມື່ອຕອນທີ່ພຣະອົງໄດ້ນຳພວກສາວົກຂອງພຣະອົງໄປທີ່ສວນເຄັດເຊມາເນ (ມຣກ 14:51-52). ປະສົບການຂອງມາຣະໂກກັບພຣະເຢຊູໃນການໂອ້ລົມກັບເປໂຕໄດ້ຊ່ວຍໃຫ້ລາວຮູ້ຈັກວ່າພຣະເຢຊູຄືຜູ້ໃດກັນແທ້.

ມາຣະໂກໄດ້ຕັ້ງຊື່ປຶ້ມຂອງການບັນທຶກຂອງລາວວ່າການເລີ້ມຕົ້ນຂ່າວປະເສີດຂອງພຣະເຢຊູຄຣິດ. ຂ່າວປະເສີດກໍຄືຂ່າວດີກ່ຽວກັບພຣະເຢຊູ. ພຣະເຢຊູແມ່ນພຣະຄຣິດທີ່ຄົນຊາວຢິວພາກັນຫວັງຄອຍຖ້າວ່າຈະມາ. ພຣະຄຣິດ

ແມ່ນຄຳເວົ້າໃນພາສາກຣີກຊຶ່ງຕົງກັບພາສາເຮັບເຣີວ່າພຣະເມຊີອາ, ຊຶ່ງມີຄວາມໝາຍວ່າ "ຜູ້ຖືກຊົງເຈີມໄວ້." ເພື່ອຫລີກເວັ້ນການເຂົ້າໃຈຜິດໃນຄວາມໝາຍຂອງລາວ, ມາຣະໂກກໍເພີ່ມຄຳວ່າ "ພຣະບຸດຂອງພຣະເຈົ້າ" ເຂົ້າໄປທັນທີ.

ພຣະວິນຍານບໍຣິສຸດໄດ້ນຳພາມາຣະໂກໃຫ້ບັນທຶກເຣື່ອງຂອງໂຢຮັນບັບຕິສະໂຕກ່ອນ, ຜູ້ປະກາດພຣະທັມຄົນທຳອິດນັບຈາກມາລາກີ. ມາຣະໂກໄດ້ໃຫ້ນາມຂອງໂຢຮັນບັບຕິສະໂຕວ່າຜູ້ນຳຂ່າວທີ່ຜູ້ທຳນວາຍເອຊາຢາໄດ້ກ່າວໄວ້ລ່ວງໜ້າວ່າຈະມີຜູ້ນຳຂ່າວມາແປງທາງໃຫ້ກັບພຣະເມຊີອາ. ໂຢຮັນໄດ້ເທສນາໃນການຈັດຕຽມທາງສຳລັບພຣະເຢຊູ. ຝູງຊົນເປັນຈຳນວນຫລວງຫລາຍໄດ້ພາກັນມາຟັງໂຢຮັນເທສນາເຣື່ອງການຖິ້ມໃຈເກົ່າຮັບເອົາໃຈໃໝ່ແລະຮັບບັບຕິສະມາໃນແມ່ນ້ຳຢໍດາເນ. ໂຢຮັນໄດ້ເປັນຕົວແທນຂອງສຽງຜູ້ທີ່ຮ້ອງໄຫ້ໃນປ່າ."

ໂຢຮັນໄດ້ຊັກຊວນຝູງຄົນໃຫ້ຖິ້ມໃຈເກົ່າຢ່າງແທ້ຈິງ- ໃຫ້ຫັນຈາກຄວາມຜິດບາບແລະຫັນໜ້າຫາພຣະເຈົ້າ. ການຖິ້ມໃຈເກົ່າຈາກຄວາມຜິດບາບແມ່ນການຕຽມຕົວສຳລັບຄວາມເຊື່ອໃນພຣະຄຣິດ. ໃນການເຮັດທາງຂອງອົງພຣະຜູ້ເປັນເຈົ້າໃຫ້ຊື່ໄປໝາຍຄວາມວ່າຈັດຕຽມຫົນທາງຕົງໄປຫາພຣະເຈົ້າໂດຍກົງ. ພວກເຮົາບໍ່ສາມາດເຮັດຕາມທິສດີທີ່ມະນຸດຕັ້ງຂຶ້ນຫລືປະຕິບັດຕາມຂັ້ນຕອນຂອງສາສນາເພື່ອຈະໄປຫາພຣະເຢຊູ. ທາງແປນແລະກ້ຽງດີຂອງພຣະເຈົ້າ ແມ່ນຕ້ອງລະຖິ້ມຄວາມເຫັນຊອບສ່ວນຕົວແລະການເປີດຫົວໃຈຂອງພວກທີ່ມີຄວາມເຊື່ອໃຫ້ພຣະອົງໂດຍການຖິ້ມໃຈເກົ່າໃຫ້ຈົນໝົດສິ້ນ.

ຄືກັນກັບໂຢຮັນ, ພວກຄຣິສຕຽນເຂົ້າໃຈວ່າມີແຕ່ພຣະເຢຊູເປັນທາງດຽວເທົ່ານັ້ນທີ່ມີສາຍສຳພັນອັນຖືກຕ້ອງກັບພຣະເຈົ້າ. ເໝືອນດັ່ງໂຢຮັນບັບຕິສໂຕອີກເທື່ອນຶ່ງ, ພວກເຮົາມີໜ້າທີ່ຮັບຜິດຊອບແລະຊົມຊື່ນຍິນດີໃນການແບ່ງປັນກັບຄົນອື່ນໆເຖິງຄວາມຕ້ອງການທີ່ຕ້ອງຖິ້ມໃຈເກົ່າຈາກຄວາມຜິດບາບແລະມີຄວາມເຊື່ອໃນພຣະເຢຊູ, ພຣະບຸດອົງດຽວຂອງພຣະເຈົ້າ

2. **<u>ຮູ້ຈັກຣິດເດດຂອງພຣະເຢຊູ</u>** (ມາຣະໂກ 1:7,9-13)

ຝູງຊົນທີ່ມາເຫັນການບັບຕິສະມາຂອງໂຢຮັນກໍສົງສັຍວ່າລາວເປັນພຣະເມຊີອາ. ໂຢຮັນຍັງສືບຕໍ່ຖ່ອມຕົວລົງໃນຕຳແໜ່ງພະນັກງານປ່າວປະກາດເພື່ອຜູ້ທີ່ຈະມາພາຍຫລັງລາວ. ໂຢຮັນໄດ້ບັນລະຍາຍເຖິງຄຸນນະພາບສາມປະການຂອງພຣະເມຊີອາອົງທ່ຽງແທ້.

ອັນທີນຶ່ງ, ພຣະຄຣິດຈະມີຣິດເດດເໜືອກ່ວາໂຢຮັນ. ບໍ່ວ່າມາຣະໂກຫລືຜູ້ບັນທຶກຂ່າວປະເສີດຄົນອື່ນໆ ກໍບໍ່ໄດ້ຂຽນໄວ້ວ່າໂຢຮັນເຮັດສິ່ງອັສຈັນໄດ້. ພວກເຂົາໄດ້ລາຍງານວ່າພຣະເຢຊູປິ່ນປົວຄົນເຈັບໄຂໃຫ້ຫາຍໄດ້, ໃຫ້ຄົນຂີ້ທູດດີສະອາດໄດ້, ແລະໃຫ້ຄົນທີ່ຕາຍແລ້ວເປັນຄືນມາ.

ອັນທີສອງ, ພຣະຄຣິດຈະມີຕຳແໜ່ງທີ່ມີຄ່າກວ່າຂອງໂຢຮັນ. ໂຢຮັນໄດ້ມີຄວາມເຂົ້າໃຈວ່າພຣະຄຣິດເທົ່ານັ້ນທີ່ສົມຄວນໄດ້ຮັບຄຳສັຣເສີນແລະການນະມັສການຈາກມວນມະນຸດ. ໂຢຮັນບໍ່ໄດ້ຄາດຫວັງວ່າຕົວລາວເອງຈະສົມຄວນແມ້ຈະແກ້ສາຍເກີບຂອງພຣະເຢຊູ.

ອັນທີສາມ, ພຣະຄຣິດມີເປົ້າໝາຍທີ່ຍິ່ງໃຫຍ່ກວ່າຂອງໂຢຮັນ, ຝູງຊົນທີ່ຕິດຕາມການບັບຕິສະມາຂອງໂຢຮັນ, ກໍພຽງແຕ່ໄດ້ຮັບ(ການມຸດຈຸ່ມລົງ)ດ້ວຍນ້ຳແຕ່ພຽງເທົ່ານັ້ນ, ຊຶ່ງເປັນສັນຍາລັກບອກເຖິງສິ່ງໃຫ້ເຫັນທາງນອກຫຼາຍກວ່າທາງພາຍໃນມີການຖິ້ມໃຈເກົ່າຮັບເອົາໃຈໃໝ່ທີ່ພວກຄົນໄດ້ມີປະສົບການ. ມີແຕ່ພຣະເຢຊູເທົ່ານັ້ນທີ່ສາມາດຈຸ່ມມຸດພວກທີ່ມີຄວາມເຊື່ອໃນພຣະວິນຍານບໍຣິສຸດ.

ພຣະເຢຊູໄດ້ເດີນທາງຈາກບ້ານເຮືອນຂອງພຣະອົງໃນເມືອງນາຊາເຣັດແຂວງຄາລິເລ, ທາງຕາເວັນອອກສ່ຽງໃຕ້ຈົນເຖິງແມ່ນ້ຳຢໍດາເນບ່ອນທີ່ໂຢຮັນໃຫ້ຮັບບັບຕິສະມາ. ພຣະເຢຊູຢາກໃຫ້ໂຢຮັນບັບຕິສະມາໃຫ້ແກ່ພຣະອົງ. ພຣະເຢຊູບໍ່ມີຄວາມຜິດບາບ(ແລະບໍ່ຕ້ອງການໆຖິ້ມໃຈເກົ່າເອົາໃຈໃໝ່), ແຕ່ພຣະອົງກໍຍອມຮັບບັບຕິສະມາ, ເພື່ອໃຫ້ເປັນການຕໍ່ເນື່ອງຄຳເທສນາສັ່ງສອນການຖິ້ມໃຈເກົ່າເອົາໃຈໃໝ່ຂອງໂຢຮັນກັບການຮັບໃຊ້ຂອງພຣະເຢຊູ.

ພຣະເຈົ້າຕັດກ່າວຈາກສວັນປະກາດວ່າພຣະເຢຊູແມ່ນພຣະບຸດຂອງພຣະອົງ ຫລັງຈາກທີ່ພຣະເຢຊູພົ້ນຂຶ້ນຈາກນ້ຳ. ຟ້າສວັນໄດ້ຖືກແຍກອອກ. ພຣະວິນຍານຂອງພຣະເຈົ້າໄດ້ລົງມາສະຖິດຢູ່ເທິງພຣະເຢຊູເຫມືອນດັ່ງນົກເຂົາ. ພຣະເຈົ້າຮັບຮູ້ວ່າພຣະເຢຊູເປັນບຸດສຸດທີ່ຮັກຂອງພຣະອົງຊຶ່ງພຣະອົງຊົງພໍພຣະທັຍເປັນທີ່ສຸດ.

ທັນໃດນັ້ນພຣະວິນຍານຂອງພຣະເຈົ້າກໍໄດ້ນຳພາພຣະເຢຊູເຂົ້າໄປເຖິງຖິ່ນກັນດານ,ເຂດທະເລຊາຍຊຶ່ງເປັນທີ່ອາສັຍຂອງຝູງສັດປ່າ. ພຣະເຢຊູໄດ້ຖືກທົດລອງຈາກມານຊາຕານພາຍໃນ **40** ວັນ. ການບັນທຶກຂອງມັດທາຍໄດ້ບອກໄວ້ວ່າພຣະເຢຊູຖືສິນອົດອາຫານເປັນເວລາສີ່ສິບວັນ, ຈຶ່ງເຮັດໃຫ້ພຣະອົງອ່ອນເພັຽຝ່າຍຮ່າງກາຍ. ຕໍ່ມາຊາຕານກໍຂູ່ເຂັນພຣະອົງ (ມັດທາຍ 4:1-11). ພຣະເຢຊູອົດທົນກັບການທໍຣະມານແລະໄດ້ຮັບຊັຍຊະນະເຫນືອການທົດລອງຂອງຜີມານຊາຕານ. ພຣະເຈົ້າບໍ່ໄດ້ສົ່ງຝູງເທວະດາມາຊ່ວຍພຣະເຢຊູໃນການທົດລອງນັ້ນເພາະວ່າພຣະເຢຊູຜູ້ດຽວກໍມີຄວາມສາມາດທີ່ຈະກຳຈັດກັບຜີຖ່ອຍຮ້າຍໄດ້. ຫລັງຈາກທີ່ຊາຕານໄດ້ຫນີຈາກໄປແລ້ວ, ຝູງເທວະດາກໍມາເຝົ້າບົວລະບັດຕໍ່ພຣະອົງ.

ຣິດເດດຂອງພຣະເຈົ້າໂດຍຜ່ານພຣະເຢຊູຜູ້ດຽວເທົ່ານັ້ນສາມາດເຮັດໃຫ້ຄຣິສຕຽນມີຊັຍເຫນືອການທົດລອງ. ພຣະອົງອາດຈະໃຊ້ຝູງເທວະດາຂອງພຣະອົງມາເຝົ້າແລະຊ່ວຍເຫລືອພວກເຮົາໃນເວລາຕ່າງໆກັນ, ແຕ່ວ່າພວກເຮົາຈະບໍ່ເພິ່ງອາສັຍຝູງເທວະດາໃນການຕໍ່ສູ້ກັບຊາຕານ. ພວກເຮົາສາມາດທີ່ຈະຢືນສູ້ຢ່າງເຂັ້ມແຂງແລະໂດຍຜ່ານຄວາມຈິງໃນພຣະບຸດພຣະເຈົ້າຄື-ພຣະເຢຊູເຈົ້າຂອງພວກເຮົາ.

**3. <u>ຮູ້ຈັກອຳນາດຂອງພຣະເຢຊູ</u>** (ມາຣະໂກ 1:21-28)

ຫລັງຈາກທີ່ໂຢຮັນບັບຕິສະໂຕຖືກຈັບແລ້ວ, ພຣະເຢຊູໄດ້ເອີ້ນເອົາຊາວຫາປາສີ່ຄົນ (ເປໂຕກັບອັນເດອາ, ຢາໂກໂບກັບໂຢຮັນ) ໃຫ້ປະເຮືອຂອງພວກເຂົາແລະກາຍມາເປັນຜູ້ຫາຄົນ. ພຣະຄຣິດຕ້ອງການໃຫ້ສາວົກຂອງພຣະອົງໃນສມັຍນີ້ໄປເຜີຍແຜ່ແກ່ຄົນອື່ນໆເຣື່ອງຂ່າວປະເສີດຂອງພຣະອົງ ເພື່ອວ່າພວກເຂົາກໍຈະສາມາດຮູ້ຈັກກັບພຣະອົງແລະປະສົບການກັບຊີວິດຂອງພຣະອົງໄດ້ເຊັ່ນກັນ.

ເມືອງກາເປນາອູມແມ່ນຢູ່ທາງພາກເຫນືອຂອງແຄມທະເລຄາລີເລ, ບ່ອນທີ່ພຣະເຢຊູແລະພວກສາວົກຂອງພຣະອົງໄດ້ໃຊ້ເວລາຢູ່ທີ່ນັ້ນດົນນານ. ຕາມການປະພຶດຂອງພວກເຂົາເຈົ້າໃນວັນຊະບາໂຕ, ພຣະເຢຊູແລະພວກທີ່ຕິດຕາມພຣະອົງກໍໄດ້ໄປທີ່ໂຮງທັມມະເທສນາຕາມທ້ອງຖິ່ນ. ຕາມປົກກະຕິຜູ້ທີ່ເປັນແຂກຈະຖືກເຊີນໃຫ້ອ່ານພຣະທັມແລະກ່າວກ່ຽວເຣື່ອງພຣະຄຳຕອນນັ້ນ. ຝູງຄົນທີ່ໄດ້ຟັງພຣະເຢຊູກໍປລາດໃຈເພາະວ່າການສອນຂອງພຣະອົງມີອຳນາດ, ບໍ່ເຫມືອນກັບພວກນັກທັມຂອງພວກເຂົາທີ່ເອົາພຣະທັມມາກ່າຍອອກແລ້ວກໍເອົາມາສອນພວກເຂົາ. ການສອນພຣະຄັມພີເປັນແບບວິຊານຶ່ງທັມມະດາມັນມີຄວາມແຕກຕ່າງກັບການສອນທີ່ອອກມາຈາກປະສົບການສ່ວນຕົວຈາກຄວາມຈິງຂອງພຣະທັມແລະຈາກຜູ້ທີ່ໄດ້ບັນດົນພຣະທັມນັ້ນ.

ພຣະເຢຊູສຳແດງອຳນາດຂອງພຣະອົງອອກມາໃຫ້ເຫັນໃນໂຄງແບບເຣື່ອງລະຄອນ. ຊາຍຄົນນຶ່ງທີ່ຢູ່ໃນໂຮງທັມມະເທສນາໄດ້ມີວິນຍານຮ້າຍເຂົ້າສິງຢູ່ຫລາຍໂຕ, ຂນະທີ່ພຣະເຢຊູກຳລັງສິດສອນຢູ່, ຜີຮ້າຍເຫລົ່ານັ້ນທີ່ສິງຢູ່ໃນຊາຍຄົນນັ້ນກໍຮ້ອງໄຫ້ອອກມາດ້ວຍຄວາມຢ້ານກົວ. ພວກເຂົາເບິ່ງເຫັນວ່າພຣະເຢຊູມີອຳນາດທີ່ຈະທຳລາຍພວກເຂົາ (ຜີຖ່ອຍຮ້າຍ, ກິຈການຊົ່ວຂອງມັນ, ແລະກຳລັງທັງຫມົດຂອງມານ). ການເປີດເຜີຍອັນນີ້ຊີ້ໃຫ້ເຫັນອຳນາດຂອງພຣະເຢຊູວ່າເປັນພຣະບຸດພິເສດຂອງພຣະເຈົ້າ. ແມ້ກະທັ້ງຜີມານກໍແຜດສຽງຮ້ອງອອກມາເມື່ອຮູ້ວ່າພຣະເຢຊູແມ່ນຜູ້ບໍຣິສຸດຈາກພຣະເຈົ້າ. ພຣະເຢຊູສຳແດງຣິດອຳນາດຂອງພຣະອົງຢ່າງກ້າຫານເຫນືອກຳລັງຂອງຜີຮ້າຍໂດຍອອກຄຳສັ່ງໃຫ້ວິນຍານຊົ່ວຮ້າຍທັງຫລາຍໃຫ້ມິດງຽບຢູ່ແລະໃຫ້ອອກມາຈາກຊາຍຄົນນັ້ນ. ຜີຮ້າຍໄດ້ເຮັດໃຫ້ຊາຍຄົນນັ້ນເປັນຊັກແລະຮ້ອງອອກມາ, ແຕ່ກໍຍອມເຊື່ອຟັງພຣະເຢຊູແລະກໍໄດ້ອອກຈາກຮ່າງກາຍຂອງຊາຍຄົນນັ້ນ.

ພວກທີ່ໄດ້ເຫັນກໍເປັນພຍານວ່າເປັນການອັສຈັນ. ປານນັ້ນພວກເຂົາກໍຍັງບໍ່ເປັນເອກກະສັນກັນໃນສິ່ງທີ່ພວກ

ເຂົາໄດ້ເຫັນນັ້ນ. ພວກເຂົາພຽງຮູ້ຈັກວ່າພຣະເຢຊູສິດສອນດ້ວຍຣິດອຳນາດແລະມີພະລັງທີ່ຈະສັ່ງແມ້ກະທັ້ງວິນຍານທີ່ຊົ່ວຮ້າຍເຫລົ່ານັ້ນ.

ຜີຮ້າຍບໍ່ແມ່ນຜູ້ທີ່ເທົ່າທຽມກັບພຣະເຢຊູຫລືຄູ່ແຂ່ງທີ່ບາງພວກຄຶດຕວງເອົາໄວ້ນັ້ນ, ຄວາມດີກັບຄວາມຊົ່ວມັນຫາກຄຽງຄູ່ກັນໄປສເມີຕາມນັກທິສດີຕ່າງໆແລະກຸ່ມສາສນາປອມທັງຫລາຍເຊື່ອ. ພຣະເຢຊູເປັນພຣະຜູ້ເປັນເຈົ້າເຫນືອສິ່ງທັງປວງ. ຢາໂກໂບຊຶ່ງເປັນນ້ອງຝ່າຍມະນຸດຂອງພຣະເຢຊູ (ມາຣະໂກ 6:1-3) ຊີ້ໃຫ້ເຫັນເຖິງການຍອມຮັບຄວາມສລຽວສລາດບໍ່ແມ່ນຄວາມເຊື່ອເພື່ອຄວາມລອດພົ້ນ, ຂນາດວ່າຜີມານ"ເຊື່ອຈົນຕົວສັ່ນ"(ຢາໂກໂບ 2:19). ຄວາມເຊື່ອທີ່ໃຫ້ພົ້ນໄດ້ນັ້ນຕ້ອງຍອມຮັບເອົາຣິດອຳນາດຂອງພຣະຄຣິດວ່າ ພຣະອົງເປັນພຣະຜູ້ເປັນເຈົ້າແລະເປັນພຣະຜູ້ຊ່ວຍໃຫ້ລອດພົ້ນບາບ. ຂນະທີ່ພວກເຮົາອ່ານພຣະທັມຂອງພຣະເຈົ້າແລະຍອມຢູ່ໃຕ້ຣິດອຳນາດ ຂອງພຣະເຢຊູໃນຊີວິດຂອງພວກເຮົາ, ພວກເຮົາສາມາດເລີ້ມທີ່ຈະປະສົບການກັບພະລັງອຳນາດຂອງພຣະອົງໃນຕົວເຮົາແລະຜ່ານຕົວພວກເຮົາ. ພວກເຮົາສາມາດແບ່ງປັນພຣະທັມຂອງພຣະເຈົ້າຢ່າງຫມັ້ນໃຈໄດ້ໂດຍອາສັຍຣິດອຳນາດຂອງພຣະວິນຍານບໍຣິສຸດ.

## ບົດຮຽນຊີວິດ

ໃນສັງຄົມປະເພນີຂອງສມັຍໃຫມ່ນີ້ໄດ້ນຳເອົາພຣະເຢຊູໄປຄຽງຂ້າງກັບສາສນາອື່ນໆແລະບອກວ່າເປັນທາງເລືອກອີກທາງນຶ່ງໃນຫລາຍໆທາງ. ຖ້າພວກເຮົາຫາກຍອມເຂົ້າຮ່ວມຄວາມດຶງດູດຂອງວິຖີມະນຸສໂລກ, ພວກເຮົາກໍລົດຄຸນຄ່າຣິດອຳນາດຂອງພຣະເຢຊູເທິງຊີວິດຂອງພວກເຮົາ. ແຕ່ວ່າ, ຖ້າຫາກພວກເຮົາເຂົ້າໃຈເຖິງຕຳແຫນ່ງພິເສດຂອງພຣະເຢຊູວ່າເປັນພຣະບຸດຂອງພຣະເຈົ້າເທົ່ານັ້ນ, ຕໍ່ຈາກນັ້ນພວກເຮົາຕ້ອງຮັບຮູ້ສິດທິການປົກຄອງຂອງພຣະອົງ. ໂດຍການເຂົ້າຮ່ວມກັບພຣະອົງເທົ່ານັ້ນ, ໂດຍການຮັກພຣະອົງ, ແລະໂດຍການຕິດຕາມພຣະອົງທຸກວັນພວກເຮົາສາມາດເປັນສາວົກທີ່ມີປະສິດທິພາບຂອງພຣະຄຣິດໄດ້.

ແມ່ນຫຍັງຄືພື້ນຖານແຫ່ງຄວາມຈິງສາມຢ່າງທີ່ພວກເຮົາໄດ້ເຫັນໃນບົດຮຽນນີ້?

- ພຣະເຢຊູແມ່ນບຸດສຸດທີ່ຮັກທີ່ພິເສດອົງດຽວເທົ່ານັ້ນຂອງພຣະເຈົ້າ. ໂດຍຜ່ານການຕາຍທີ່ເປັນເຄື່ອງຖວາຍບູຊາແລະການຄືນພຣະຊົນອັນຊົງຣິດເດດຂອງພຣະອົງເທົ່ານັ້ນ ພວກເຮົາສາມາດຮັບຊີວິດອັນຕລອດໄປເປັນນິດແລະມີສາຍສຳພັນກັບພຣະເຈົ້າ.
- ເຫມືອນດັ່ງທີ່ພຣະເຢຊູມີອຳນາດເອົາຊະນະຕໍ່ການທົດລອງແລະຄວາມບາບ, ພຣະອົງກໍໄດ້ປະທານຄວາມສາມາດໃຫ້ແກ່ພວກທີ່ຕິດຕາມພຣະອົງໃຫ້ຊະນະຕໍ່ເຫຍື່ອແຫ່ງຄວາມລໍ້ລວງ ຂອງມານຮ້າຍແລະມີຊັຍຊະນະໃນຊີວິດຝ່າຍຈິດວິນຍານ.
- ເພາະວ່າພຣະເຢຊູມີຣິດອຳນາດທັງຫມົດໃນສວັນແລະແຜ່ນດິນໂລກ, ພຣະອົງກໍສາມາດສົ່ງພວກເຮົາອອກໄປໂດຍຣິດອຳນາດຂອງພຣະອົງເພື່ອໄປແບ່ງປັນພຣະທັມຂອງພຣະອົງໃຫ້ແກ່ທຸກໆຄົນທີ່ພວກເຮົາໄດ້ພົບ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PA